ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0382 /ທຄຕລ.2026
ນະຄອນຫຼວງວຽງຈັນ, ວັນທີ: 08 MAY 2026

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາ ບໍລິສັດ/ຜູ້ສະໜອງ ຢູ່ພາຍໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ເຊີນເຂົ້າຮ່ວມການປະມູນລາຄາ ອອກແບບ-ຜະລິດປະຕິທິນ ທຄຕລ ປະຈຳປີ 2027.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາ ບໍລິສັດ/ຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ອອກແບບ-ຜະລິດປະຕິທິນ ປະຈຳປີ 2027 ໃຫ້ ທຄຕລ ຕາມລາຍລະອຽດໜ້າວຽກລຸ່ມນີ້:

| ລ/ດ | ລາຍການ | ໜ້າວຽກ |
|---|---|---|
| I | **ຈັດທຳ-ອອກແບບ ປະຕິທິນ** | - ຄິດ Concept ປະຕິທິນ.<br>- ອອກແບບຊຸດແຕ່ງກາຍຂອງນາງສາວປະຕິທິນ (ຂຶ້ນກັບຄອນເຊັບ).<br>- ເຄື່ອງປະດັບ (ຂຶ້ນກັບຄອນເຊັບ).<br>- ຊ່າງແຕ່ງໜ້ານາງສາວປະຕິທິນ.<br>- ສະຖານທີ່ຖ່າຍທຳ Location (ຂຶ້ນກັບຄອນເຊັບ).<br>- ຖ່າຍທຳ-ຖ່າຍຮູບນາງສາວປະຕິທິນ.<br>- ປະສານ-ຊອກຫາປະຕິທິນລາວ ພສ 2569-2570 (ປີ 2027).<br>- ອອກແບບ, ຈັດໜ້າວັນເດືອນປີ (ວັນສິນ ແລະ ວັນສຳຄັນຂອງຊາດ).<br>- ຜ່ານແບບປະຕິທິນ ນຳກະຊວງຖະແຫຼງຂ່າວ-ວັດທະນະທຳ. |
| II | **ຈັດພິມ** | **ຈັດພິມປະຕິທິນ ທຄຕລ** |
| | 2.1 ປະຕິທິນແຂວນຝາ | - ຈຳນວນ 40,000 ອັນ.<br>- ຂະໜາດ: 45*70 cm (2 ເດືອນ/ໜ້າ), ເຈ້ຍໜາ 160 ແກຼມ.<br>- ພິມ 4 ສີ: ພິມ 1 ໜ້າ/ໃບ, ທັງໝົດ 7 ໃບ/ຊຸດ ລວມໜ້າປົກ.<br>- ໃສ່ຢ່ວງສີຂາວ ເຕັມຫົວ.<br>- ການຫຸ້ມຫໍ່: ແຕ່ລະອັນກໍ່ໃສ່ຖົງຢາງໃສ, 50 ອັນ/ແກັດ, ລະບຸລາຍລະອຽດສິນຄ້າໃສ່ທຸກໆໜ້າແກັດ. |
| | 2.2 ປະຕິທິນຕັ້ງໂຕະ | - ຈຳນວນ 70,000 ອັນ.<br>- ຂະໜາດໃບປະຕິທິນ: 17*21*9 cm (2 ເດືອນ/ໜ້າ), ໜາ 200 ແກຼມ.<br>- ຂະໜາດຖານຕັ້ງສີແດງ: 18,5*21*9 cm, ໜາ 1,200 ແກຼມ.<br>- ພິມ 4 ສີ: ພິມ 2 ໜ້າ/ໃບ, ທັງໝົດ 7 ໃບ/ຊຸດ ລວມໜ້າປົກ.<br>- ໃສ່ຢ່ວງສີຂາວ ເຕັມຫົວ.<br>- ການຫຸ້ມຫໍ່: 50 ອັນ/ແກັດ, ລະບຸລາຍລະອຽດສິນຄ້າ ໃສ່ທຸກໆໜ້າແກັດ. |

**ໝາຍເຫດ:**

1. ຜູ້ສະໜອງທີ່ມີຄວາມສົນໃຈເຂົ້າຮ່ວມປະມູນ ຕ້ອງມີຄວາມສາມາດປະຕິບັດໜ້າວຽກທັງສອງຂໍ້ດ້ານເທິງ (ຂໍ້ I, II), ແຕ່ ທຄຕລ ຈະພິຈາລະນາດ້ານລາຄາ ແຍກຕາມໜ້າວຽກ (ຂໍ້ I, II); ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).
2. ສາມາດສອບຖາມຂໍ້ມູນເພີ່ມຕື່ມ ແລະ ມາເບິ່ງຕົວຢ່າງສິນຄ້າຂອງ ທຄຕລ ໄດ້ນັບຈາກວັນນີ້ເປັນຕົ້ນໄປ ຈົນເຖິງວັນທີ 20/05/2025 ທີ່ ພະແນກຫ້ອງການບໍລິຫານ-ການເງິນ, ສຳນັກງານໃຫຍ່ ທຄຕລ, ຊັ້ນ 4 ອາຄານ C.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

⏩ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

***ເອກະສານຊອງທີ 1:**

1.1 ປະກອບເອກະສານໃບນາມນິຕິບຸກຄົນ ທີ່ດຳເນີນທຸລະກິດທີ່ກ່ຽວຂ້ອງ ຢ່າງໜ້ອຍ 3 ປີຂຶ້ນໄປ ແລະ ໃຫ້ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2023, 2024, 2025 ແລະ ເອກະສານກ່ຽວກັບຜົນງານຜ່ານມາຂອງບໍລິສັດ.

1.2 ສາມາດຍື່ນເອກະສານຂ້າງເທິງໄດ້ ນັບຈາກວັນນີ້ຈົນເຖິງ ວັນພຸດ, ທີ 20/05/2026 ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍສະແກນເປັນ PDF ເຂົ້າມາທີ່ Email: procurement@bcel.com.la.

1.3 ຜູ້ສະໜອງຕ້ອງມານຳສະເໜີຮູບແບບປະຕິທິນ ໃນວັນຈັນ, ທີ 25/05/2026 ຕອນເຊົ້າ.

***ເອກະສານຊອງທີ 2 (ປິດຊອງ):**

2.1 ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາ ໃນວັນອັງຄານ, ທີ **09/06/2026 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົວເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5/2 ຕຶກ C ສຳນັກງານໃຫຍ່ ທຄຕລ.

2.2 ໃບສະເໜີລາຄາໃຫ້ລະບຸແຍກ ຕາມໜ້າວຽກ ຂໍ້ I, II ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບ (ທຄຕລ ຈະພິຈາລະນາແຍກ).

2.3 ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນບໍ່ໃຫ້ຫຼຸດ 10% ຂອງມູນຄ່າທັງໝົດລວມອາກອນ ດ້ວຍໜັງສືຄ້ຳປະກັນທີ່ອອກ ໂດຍ ທຄຕລ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 30/09/2026) ຫຼື ແຊັກທີ່ວີຊ່າແລ້ວ (ບໍ່ຮັບເງິນສົດ); ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງແຊັກ/ໜັງສື ຄ້ຳປະກັນດັ່ງກ່າວຄືນໃຫ້ຜູ້ສະໜອງທີ່ບໍ່ໄດ້ຮັບການຄັດເລືອກ, ສຳລັບຜູ້ສະໜອງທີ່ໄດ້ຮັບການຄັດເລືອກ ແມ່ນຈະສົ່ງຄືນຫຼັງຈາກສຳເລັດວຽກທັງໝົດຕາມສັນຍາ.

2.4 ຖ້າຜູ້ສະໜອງບໍ່ວາງເງິນຄ້ຳປະກັນການປະມູນ ຕາມທີ່ລະບຸໄວ້ໃນຂໍ້ທີ 2.3 ແມ່ນ ທຄຕລ ຈະປະຕິເສດການຮັບຊອງໃບສະເໜີລາຄາ.

**ໝາຍເຫດ**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

⏩ **ເງື່ອນໄຂສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງບໍລິສັດ.
- **ການຊຳລະແມ່ນອີງຕາມໜ້າວຽກ:**
  - ຊຳລະ 100% ຂອງໜ້າວຽກຂໍ້ທີ I ພາຍຫຼັງສຳເລັດໜ້າວຽກທັງໝົດຕາມໜ້າວຽກ ຂໍ້ I.
  - ຊຳລະ 100% ຂອງໜ້າວຽກຂໍ້ທີ II ພາຍຫຼັງສຳເລັດການຈັດພິມ ແລະ ສົ່ງ ທຄຕລ ສຳເລັດຕາມໜ້າວຽກ ຂໍ້ II.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ທ່ານ. ສາຍສະໜອນ ຈັນທະຈັກ

ຕິດຕໍ່ພົວພັນ: ຂະແໜງສະໜອງວັດຖຸເຕັກນິກ
021 213200 ຕໍ່ 414 (ໂມງລັດຖະການ)







ຂະໜາດ: ຂາຕັ້ງ 21 x 18,5 cm

ຂະໜາດ: ໃບປະຕິທິນ 21 x 17 cm

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ(ທີ່ເຄີຍສະໜອງປະຕິທິນໃຫ້ພາກສ່ວນໃດແນ່) | ໜ້າວຽກ /ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | ລາຍລະອຽດອອກແບບຖ່າຍທຳ+ Timeline | | | ...... | |
| 2 | | | | | (ໃຫ້ລະບຸ) | ລາຍລະອຽດຈັດພິມ | ພາຍໃນ ຫຼື ຕ່າງປະເທດ (ລະບຸປະເທດ) | .... ປີ | ...... | |

**ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.**

ນະຄອນຫຼວງວຽງຈັນ, ວັນທີ .........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: